# ບັນທຶກຊ່ວຍຈຳ
# ກ່ຽວກັບ ການປະຕິບັດສັນຍາ
# ວ່າດ້ວຍ ການຂົນສົ່ງຜ່ານແດນ ທາງລົດ
# ລະຫວ່າງ

**ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ ສາທາລະນະລັດ ປະຊາຊົນຈີນ**

ກ່ຽວກັບ ການປະຕິບັດສັນຍາ ວ່າດ້ວຍ ການຂົນສົ່ງຜ່ານແດນ ທາງລົດ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ເຊິ່ງໄດ້ເຊັນກັນທີ____________________ໃນວັນທີ____________________ ຄູ່ສັນຍາ ໄດ້ມີຄວາມເຂົ້າໃຈ ເປັນເອກະພາບນຳກັນ ດັ່ງນີ້ຕໍ່ລົງໄປນີ້:

1. <u>ໃນສັນຍາຂ້າງເທິງນີ້, ອົງກອນທີ່ມີສິດອຳນາດ ແມ່ນດັ່ງຕໍ່ໄປນີ້</u>:

ກ. <u>ຝ່າຍຈີນ</u>:

ໃນມາດຕາ 2, 3, 5, 9, 10, 20, 24, ແລະ 25 ແມ່ນກະຊວງ ຄົມມະນາຄົມ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ແລະ ກົມຄົມມະນາຄົມ ແຫ່ງ ມົນທົນຢູນນານ ທີ່ໄດ້ຮັບອະນຸຍາດ.

ໃນມາດຕາ 7 ແລະ 12 ແມ່ນກະຊວງ ຄົມະນາຄົມ, ກະຊວງ ຮັກສາຄວາມໝັ້ນຄົງ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ແລະ ກົມຄົມມະນາຄົມ ຫລື ກົມຮັກສາຄວາມໝັ້ນຄົງ ແຫ່ງ ມົນທົນຢູນນານ ທີ່ໄດ້ຮັບອະນຸຍາດ.

ຂ. <u>ຝ່າຍລາວ</u>:

ໃນມາດຕາ 2, 3, 5, 9, 10, 20, 24, ແລະ 25 ແມ່ນກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ພະແນກ ຄົມມະນາຄົມ ປະຈຳແຂວງ ທີ່ໄດ້ຮັບອະນຸຍາດ.

ໃນມາດຕາ 7 ແລະ 12 ແມ່ນກະຊວງ ຄົມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງ ພາຍໃນ, ກະຊວງ ປ້ອງກັນປະເທດ, ກະຊວງ ການເງິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບັນດາແຂວງ ທີ່ໄດ້ຮັບອະນຸຍາດ.

2. <u>ການນິຍາມຄຳສັບ ໃນສັນຍາ</u>:

2.1 **ຄຳສັບທີ່ວ່າ " ພາຫະນະຂົນສົ່ງ ທາງລົດ "**: ໃນການການຂົນສົ່ງສິນຄ້າ ແມ່ນລົດບັນທຸກສິນຄ້າ ແລະ ລົດບັນທຸກສິນຄ້າ ລາກແກ່ ປະເພດຕ່າງໆ, ສ່ວນໃນການ ຂົນສົ່ງໂດຍສານ ແມ່ນລົດໂດຍສານ ຊຶ່ງຫມາຍເຖິງພາຫະນະ ທີ່ໃຊ້ຂົນສົ່ງໂດຍສານ ແລະ ມີບ່ອນນັ່ງ ບໍ່ຕ່ຳກວ່າ 8 ບ່ອນ ໂດຍບໍ່ນັບບ່ອນນັ່ງຄົນຂັບ ແລະ ລົດເຕຣລເລີ ສຳລັບຂົນຫີບເຄື່ອງ ຂອງຜູ້ໂດຍສານ ກໍເປັນສ່ວນ

ນິ່ງຂອງລົດນຳອີກ.

2.2 **ຄຳສັບທີ່ວ່າ " ການຂົນສົ່ງ ປົກກະຕິ ":** ໝາຍເຖິງ ການຂົນສົ່ງ ທີ່ປະຕິບັດໂດຍ ພາຫະນະ ຂົນສົ່ງທາງລົດຂອງຄູ່ສັນຍາ ທີ່ສອດຄ່ອງ ຕາມຕາຕະລາງເວລາ ແລະ ເສັ້ນທາງ, ຈຸດຕົ້ນທາງ, ຈຸດປາຍທາງ ແລະ ຈຸດຈອດລົດ ຕາມທີ່ໄດ້ຕົກລົງກັນໄວ້.

2.3 **ຄຳສັບທີ່ວ່າ " ການຂົນສົ່ງ ບໍ່ປົກກະຕິ ":** ໝາຍເຖິງ ການຂົນສົ່ງອື່ນໆ ທີ່ບໍ່ໄດ້ກຳນົດໄວ້ໃນ ຂໍ້ 2.2 ຂອງບົນທຶກຊ່ວຍຈຳນີ້.

3. ການອະນຸຍາດທີ່ເວົ້າເຖິງ ໃນມາດຕາ 05 ຂອງສັນຍາສະບັບນີ້:

ບໍ່ໄດ້ອະນຸຍາດໃຫ້ຜູ້ຂົນສົ່ງ ແລະ ເຈົ້າຂອງສິນຄ້າ ຍົກເວັ້ນຈາກລະບຽບການ ພາສີ ທີ່ຈຳເປັນ ໂດຍສອດຄ່ອງ ກັບກົດລະບຽບພາຍໃນ ວ່າດ້ວຍສິນຄ້າ ຂອງແຕ່ລະປະເທດ.

4. ກ່ຽວກັບວັກ 8.2 ຂອງມາດຕາ 08 ຂອງສັນຍາສະບັບນີ້:

ລົດເທຣລເລີ ແລະ ລົດເຄິ່ງເທຣລເລີ ອາດຈະຕິດເລກທະບຽນ ແລະ ເຄື່ອງໝາຍ ຂອງປະເທດອື່ນໄດ້, ແຕ່ພາຫະນະ ຫລື ລົດລາກແກ່ ທີ່ແກ່ເທຣລເລີ ຫລື ເຄິ່ງເທຣລເລີນັ້ນ ຕ້ອງຕິດເລກທະບຽນຂອງລາວ ຫລື ຂອງຈີນ.

5. ໃນມາດຕາ 17 ແລະ 18 ":

ຄຳສັບທີ່ວ່າ ການກວດກາອານາໄມ ກັບພະຍາດ ແມ່ນໝາຍເຖິງ ການກວດກາ ສຸກຂະພາບ, ປະສຸສັດ ແລະ ອານາໄມ.

ບົນທຶກຊ່ວຍຈຳສະບັບນີ້ ເຊັນກັນ ໃນວັນທີ 3 ເດືອນ ທັນວາ 1993 ຢູ່ທີ່ ປັກກິ່ງ ເຮັດເປັນ 2 ຕົ້ນສະບັບ ແລະ ເປັນ 3 ພາສາ ພາສາລາວ, ຈີນ ແລະ ອັງກິດ ເຊິ່ງທັງສາມພາສາ ມີຄຸນຄ່າເທົ່າທຽມກັນ. ຖ້າມີຄວາມບໍ່ເຂົ້າໃຈ ໃນການຕີຄວາມໝາຍ ຕາມພາສາຂອງຄູ່ສັນຍາ ແມ່ນໃຫ້ອີງໃສ່ພາສາອັງກິດເປັນຫລັກ.

ຕາງໜ້າ ລັດຖະບານ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຕາງໜ້າ ລັດຖະບານ
ແຫ່ງ ສາທາລະນະລັດ ປະຊາຊົນຈີນ

黄镇东